ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 6003 /ກງ

ນະຄອນຫຼວງວຽງຈັນ, ວັນທີ 01 ທັນວາ 2021

# ຂໍ້ຕົກລົງຊົ່ວຄາວ
# ວ່າດ້ວຍ ການຈັດເກັບຄ່າບໍລິການສິນຄ້າຜ່ານແດນສາກົນຜ່ານທາງລົດໄຟ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ;
- ອີງຕາມ ມະຕິຂອງສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021 ວ່າດ້ວຍ ການຮັບຮອງ ເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 41/ນຍ, ລົງວັນທີ 30 ມັງກອນ 2021 ວ່າດ້ວຍ ລະບຽບການ ແລະ ກົນໄກ ການເຮັດວຽກຂອງລັດຖະບານ ຊຸດທີ IX;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບ ເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 06775 /ກພສ, ລົງວັນທີ 01 ທັນວາ 2021

## ລັດຖະມົນຕີກະຊວງການເງິນ ອອກຂໍ້ຕົກລົງຊົ່ວຄາວ:

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງຊົ່ວຄາວ ສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການກຳນົດ ຄ່າບໍລິການສຳລັບສິນຄ້າຜ່ານແດນສາກົນໄປປະເທດທີສາມຜ່ານທາງລົດໄຟ ເພື່ອຄຸ້ມຄອງຈັດເກັບລາຍຮັບ ຢ່າງລວມສູນ ແລະ ຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ ສ້າງໂອກາດໃຫ້ແກ່ ລາຍຮັບພາກລັດ ໃນການຫັນມານຳໃຊ້ການຂົນສົ່ງສິນຄ້າຜ່ານທາງລົດໄຟໃຫ້ເກີດຜົນປະໂຫຍດສູງສຸດ ປະ ກອບສ່ວນເຂົ້າໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ.

ມາດຕາ 2 ຄ່າບໍລິການສິນຄ້າຜ່ານແດນສາກົນທາງລົດໄຟ

ຄ່າບໍລິການສິນຄ້າຜ່ານແດນທາງລົດໄຟ ແມ່ນຄ່າບໍລິການທາງຜ່ານ ທີ່ນຳໃຊ້ທ່າແຮງດ້ານພູມສາດຂອງ ປະເທດໃນການໃຊ້ເປັນທາງຜ່ານ ສປປ ລາວ ໄປປະເທດທີສາມ ເພື່ອສ້າງໂອກາດເກັບລາຍຮັບພາກລັດ ປະ ກອບສ່ວນເຂົ້າໃນການບຳລຸງຮັກສາສະພາບແວດລ້ອມ, ພື້ນຖານໂຄງລ່າງທີ່ຈຳເປັນ ໃຫ້ມີຄວາມຍືນຍົງ.

ມາດຕາ 3 ອັດຕາການຈັດເກັບ ແລະ ຮູບແບບການຊຳລະ

ອັດຕາການຈັດເກັບຄ່າບໍລິການສິນຄ້າຜ່ານແດນສາກົນທາງລົດໄຟ ແລະ ຮູບແບບການຊຳລະ ມີດັ່ງນີ້:

1. ອັດຕາຄ່າບໍລິການສິນຄ້າຜ່ານແດນສາກົນ :
   - ສຳລັບຕູ້ສິນຄ້າ (Cargo Container) ຂະໜາດ 20 ຟຸດລົງມາ ເກັບໃນອັດຕາ 2.000.000 ກີບຕໍ່ຕູ້
   - ສຳລັບຕູ້ສິນຄ້າ ຂະໜາດ 40 ຟຸດ ເກັບໃນອັດຕາ 2.500.000 ກີບຕໍ່ຕູ້
   - ສຳລັບຕູ້ສິນຄ້າ ຂະໜາດ 45 ຟຸດຂຶ້ນໄປ ເກັບໃນອັດຕາ 3.000.000 ກີບຕໍ່ຕູ້
2. ຮູບແບບການຊຳລະຄ່າບໍລິການ ໃຫ້ຜ່ານລະບົບທະນາຄານ ທີ່ຕັ້ງຢູ່ ສປປ ລາວ.

ມາດຕາ 4 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມພາສີ ສົມທົບກັບ ພາກສ່ວນກ່ຽວຂ້ອງຄຸ້ມຄອງຈັດເກັບຄ່າບໍລິການສິນຄ້າຜ່ານດ່ານແດນສາກົນທາງລົດໄຟ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງຊົ່ວຄາວສະບັບນີ້ໃຫ້ ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໃຫ້ຈັດຕັ້ງປະຕິບັດຕາມຂໍ້ຕົກລົງຊົ່ວຄາວສະບັບນີ້, ພາຍຫຼັງຈັດຕັ້ງປະຕິບັດ ໃນໄລຍະໃດໜຶ່ງແລ້ວ ຈະໄດ້ເຮັດສະຫຼຸບ ຖອດຖອນບົດຮຽນ ເພື່ອລາຍງານລັດຖະບານ ພິຈາລະນາອະນຸມັດ ໃນຂັ້ນຕອນຕໍ່ໄປ.

ມາດຕາ 5 ຜົນສັກສິດ

ຂໍ້ຕົກລົງຊົ່ວຄາວສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ບຸນໂຈມ ອຸບົນປະເສີດ